**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ສະພາແຫ່ງຊາດ**

**ຄະນະປະຈຳ**

ເລກທີ 174/ຄປຈ

ນະຄອນຫຼວງວຽງຈັນ, ວັນທີ 05/07/21

# ມະຕິ

## ຂອງຄະນະປະຈຳສະພາແຫ່ງຊາດ
## ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງສະຖາບັນ
## ຄົ້ນຄ້ວານິຕິກຳສະພາແຫ່ງຊາດ

---

- ອີງຕາມ ກົດໝາຍວ່າດ້ວຍ ສະພາແຫ່ງຊາດ, ສະບັບເລກທີ 64/ສພຊ, ລົງວັນທີ 9 ທັນວາ 2015, ສະບັບປັບປຸງ ເລກທີ 10/ສພຊ, ລົງວັນທີ 14 ພະຈິກ 2016 ແລະ ສະບັບປັບປຸງ ເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020;
- ອີງຕາມ ກົດໝາຍວ່າດ້ວຍ ການຕິດຕາມກວດກາຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ສະບັບປັບປຸງ ເລກທີ 12/ສພຊ, ລົງວັນທີ 15 ພະຈິກ 2016;
- ອີງຕາມມະຕິວ່າດ້ວຍການເຄື່ອນໄຫວຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 163/ຄປຈ, ລົງວັນທີ 5 ກໍລະກົດ 2021.

ເພື່ອຮັບປະກັນໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງສະຖາບັນຄົ້ນຄ້ວານິຕິກຳສະພາແຫ່ງຊາດ ໃຫ້ມີປະສິດທິພາບ ແລະ ມີປະສິດທິຜົນ

### ຄະນະປະຈຳສະພາແຫ່ງຊາດ ຕົກລົງ:

### ໝວດທີ 1
### ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ມະຕິ ສະບັບນີ້ກຳນົດ ທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ຫຼັກການ ແລະ ແບບແຜນວິທີເຮັດວຽກ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວຂອງສະຖາບັນຄົ້ນຄ້ວານິຕິກຳສະພາແຫ່ງຊາດ ແນໃສ່ຈັດຕັ້ງຜັນຂະຫຍາຍແນວທາງນະໂຍບາຍຂອງພັກ, ກົດໝາຍ, ມະຕິ ແລະ ທິດທາງ

ແຜນການຂອງສະພາແຫ່ງຊາດ ໃນການຄຸ້ມຄອງ, ກວດກາ ແລະ ຊຸກຍູ້ສົ່ງເສີມວຽກງານຄົ້ນຄ້ວາວິທະຍາສາດ, ນິຕິບັນຍັດ ແລະ ບັນຫາສຳຄັນພື້ນຖານຂອງສະພາແຫ່ງຊາດ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

**ມາດຕາ 2 ທີ່ຕັ້ງ**

ສະຖາບັນຄົ້ນຄ້ວານິຕິກຳສະພາແຫ່ງຊາດ ແມ່ນກົງຈັກການຈັດຕັ້ງຂອງຄະນະປະຈຳສະພາແຫ່ງຊາດ ມີຊື່ຫຍໍ້ເປັນຕົວອັກສອນ **"ສນສ"**.

**ມາດຕາ 3 ພາລະບົດບາດ**

ສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ ປະຕິບັດພາລະບົດບາດ ເປັນເສນາທິການໃຫ້ແກ່ຄະນະປະຈຳສະພາແຫ່ງຊາດ ໃນການຄົ້ນຄວ້າ ແລະ ຄຸ້ມຄອງວິທະຍາສາດ ກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວຂອງສະພາແຫ່ງຊາດ, ເປັນໃຈກາງ ໃນການຍົກສູງຂີດຄວາມສາມາດ ແລະ ສະໜອງຂໍ້ມູນ-ຂ່າວສານ ໃຫ້ແກ່ສະພາແຫ່ງຊາດ, ແລະ ສະພາປະຊາຊົນຂັ້ນແຂວງ.

## ໝວດທີ 2
## ໜ້າທີ່ ແລະ ຂອບເຂດສິດຂອງສະຖາບັນຄົ້ນຄ້ວານິຕິກຳສະພາແຫ່ງຊາດ

**ມາດຕາ 4 ໜ້າທີ່**

ໜ້າທີ່ຂອງສະຖາບັນຄົ້ນຄ້ວານິຕິກຳສະພາແຫ່ງຊາດ ມີດັ່ງນີ້:

1. ຄົ້ນຄວ້າ ແລະ ຄຸ້ມຄອງວິທະຍາສາດກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວຂອງສະພາແຫ່ງຊາດ:
   - 1.1. ຄົ້ນຄ້ວາ ແລະ ສ້າງແຜນຍຸດທະສາດ, ແຜນງານ, ແຜນການ ແລະ ໂຄງການຄົ້ນຄວ້າວິທະຍາສາດ ກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວຂອງສະພາແຫ່ງຊາດ ໃຫ້ສອດຄ່ອງກັບແນວທາງນະໂຍບາຍຂອງພັກ, ລັດຖະທຳມະນູນ, ກົດໝາຍ, ນິຕິກຳໃຕ້ກົດໝາຍ, ມະຕິຂອງສະພາແຫ່ງຊາດ ແລະ ຫຼັກການຂອງສາກົນ;
   - 1.2. ຄົ້ນຄວ້າວິທະຍາສາດ ເພື່ອຮັບໃຊ້ໃຫ້ແກ່ການຈັດຕັ້ງປະຕິບັດ 3 ພາລະບົດບາດ ຂອງສະພາແຫ່ງຊາດໃນແຕ່ລະໄລຍະ;
   - 1.3. ຄົ້ນຄວ້າຫົວຂໍ້ວິທະຍາສາດ ກ່ຽວກັບທິດສະດີ ແລະ ພຶດຕິກຳ ວຽກງານສະພາ ຢູ່ພາຍໃນ ແລະ ຕ່າງປະເທດ;
   - 1.4. ຄົ້ນຄວ້າ ແລະ ວິເຄາະກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ດ້ວຍການສັງລວມຫຍໍ້ ຫຼື ປຽບທຽບເນື້ອໃນບັນຫາຕ່າງໆ ເພື່ອຍົກໃຫ້ເຫັນຄວາມສຳຄັນ, ຄຸນປະໂຫຍດ, ສິ່ງທ້າທາຍ ແລະ ຜົນສະທ້ອນອື່ນ;
   - 1.5. ເຂົ້າຮ່ວມກອງປະຊຸມຄົ້ນຄ້ວາຮ່າງກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ທີ່ບັນດາກຳມາທິການ ແລະ ຄະນະເລຂາທິການສະພາແຫ່ງຊາດຈັດຂຶ້ນ;
   - 1.6. ຄົ້ນຄ້ວາບັນຫາພື້ນຖານ ທີ່ພົວພັນເຖິງນະໂຍບາຍ, ກົນໄກ, ແບບແຜນວິທີ ແລະ ມາດຕະການ ໃນການຄຸ້ມຄອງລັດ, ເສດຖະກິດ-ສັງຄົມ, ງົບປະມານ ແລະ ອື່ນໆ ເພື່ອຍົກໃຫ້ເຫັນຂໍ້ແທ້ຈິງ, ບັນຫາ, ສາເຫດ, ສິ່ງທ້າທາຍ ແລະ ທາງເລືອກອື່ນ;
   - 1.7. ແກະຄຳເຫັນຂອງກອງປະຊຸມສະພາແຫ່ງຊາດ;

1.8. ປະສານສົມທົບກັບບັນດາກົງຈັກການຈັດຕັ້ງຂອງສະພາແຫ່ງຊາດ ໃນການຄົ້ນຄ້ວາ ແລະ ສ້າງນະໂຍບາຍ, ຍຸດທະສາດ ແລະ ທິດທາງແຜນການ ຂອງສະພາແຫ່ງຊາດ ແລະ ຄະນະປະຈຳສະພາແຫ່ງຊາດ ໃນແຕ່ລະໄລຍະ;

1.9. ສ້າງ ແລະ ຍົກລະດັບຄວາມຮູ້ດ້ານວິຊາການ ແລະ ທັກສະພື້ນຖານໃນການຄົ້ນຄວ້າວິທະຍາສາດ, ນິຕິກຳ ແລະ ບັນຫາພື້ນຖານໃຫ້ແກ່ພະນັກງານ-ລັດຖະກອນ;

1.10. ຈັດກອງປະຊຸມສຳມະນາ ແລະ ເຜີຍແຜ່ກ່ຽວກັບຜົນການຄົ້ນຄວ້າຫົວຂໍ້ວິທະຍາສາດນິຕິກຳ ແລະ , ບັນຫາພື້ນຖານໃຫ້ແກ່ພາກສ່ວນທີ່ກ່ຽວຂ້ອງ.

2. ເປັນໃຈກາງໃນການຍົກສູງຂີດຄວາມສາມາດໃຫ້ແກ່ສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນຂັ້ນແຂວງ, ພະນັກງານທີ່ເປັນເສນາທິການ ແລະ ພາກສ່ວນທີ່ກ່ຽວຂ້ອງ:

2.1. ຈັດຕັ້ງຜັນຂະຫຍາຍທິດທາງວຽກງານຂອງສະພາແຫ່ງຊາດ ໃຫ້ເປັນທິດທາງແຜນການ, ແຜນງານ ແລະ ໂຄງການໃນການຍົກສູງຂີດຄວາມສາມາດ ໃຫ້ແກ່ສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນຂັ້ນແຂວງ ແລະ ພະນັກງານທີ່ເປັນເສນາທິການ ໃນໄລຍະ 5 ປີ ແລະ ແຕ່ລະປີ;

2.2. ຄົ້ນຄ້ວາ ແລະ ກຳນົດ ກ່ຽວກັບຫົວຂໍ້, ເນື້ອໃນ, ຮູບການ, ວິທີການ ແລະ ບູລິມະສິດ ໃນການຝຶກອົບຮົມ ແລະ ສຳມະນາ ໃຫ້ບັນດາເປົ້າໝາຍທີ່ກ່ຽວຂ້ອງ ໂດຍໃຫ້ສອດຄ່ອງກັບຄວາມຕ້ອງການຂອງວຽກງານຕົວຈິງ ໃນແຕ່ລະໄລຍະ;

2.3. ຄົ້ນຄ້ວາສ້າງໂຄງການຫຼັກສູດ, ປຶ້ມຄູ່ມືການຝຶກອົບຮົມ ແລະ ສຳມະນາ ຢູ່ພາຍໃນ ລວມທັງ ຄົ້ນຄ້ວາ, ແປ ແລະ ຮຽບຮຽງຫຼັກສູດ ແລະ ຄູ່ມືທີ່ເປັນບົດຮຽນ ຈາກຕ່າງປະເທດ ເພື່ອຍົກລະດັບຄວາມຮູ້, ຄວາມສາມາດ ແລະ ປະສົບການ ໃຫ້ເປົ້າໝາຍຕ່າງໆ;

2.4. ຄົ້ນຄ້ວາ ແລະ ເລືອກເຟັ້ນວິທະຍາກອນຢູ່ພາຍໃນ ແລະ ຈາກຕ່າງປະເທດ ແລະ ເປົ້າໝາຍເຂົ້າຮ່ວມການຝຶກອົບຮົມ ແລະ ສຳມະນາໃນແຕ່ລະຄັ້ງ;

2.5. ຈັດຕັ້ງການຝຶກອົບຮົມ ແລະ ສຳມະນາ ທີ່ຕິດພັນກັບພາລະບົດບາດ, ສິດ ແລະ ໜ້າທີ່ ຂອງສະພາແຫ່ງຊາດ, ບັນດາຫົວຂໍ້ເນື້ອໃນວິທະຍາສາດ ແລະ ຫົວຂໍ້ສະເພາະດ້ານ ຂອງກົງຈັກການຈັດຕັ້ງພາຍໃນສະພາແຫ່ງຊາດ ເພື່ອຍົກສູງຂີດຄວາມສາມາດ ໃຫ້ແກ່ສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນຂັ້ນແຂວງ ແລະ ພະນັກງານທີ່ເປັນເສນາທິການ;

2.6. ສະຫຼຸບຕີລາຄາ, ປະເມີນຜົນ ແລະ ຖອດຖອນບົດຮຽນ ກ່ຽວກັບການຍົກສູງຂີດຄວາມສາມາດ ໂດຍຜ່ານການຝຶກອົບຮົມ ແລະ ສຳມະນາ ເພື່ອລາຍງານຕໍ່ຄະນະປະຈຳສະພາແຫ່ງຊາດ ໃນແຕ່ລະໄລຍະ;

3. ສ້າງຖານຂໍ້ມູນ ແລະ ສະໜອງຂໍ້ມູນຂ່າວສານວຽກງານສະພາແຫ່ງຊາດ:

3.1. ຄົ້ນຄວ້າສ້າງ ແລະ ພັດທະນາຖານຂໍ້ມູນ-ຂ່າວສານ ເພື່ອເກັບກຳ ແລະ ສະໜອງຂໍ້ມູນຂ່າວສານ ໃຫ້ແກ່ຄະນະປະຈຳສະພາແຫ່ງຊາດ, ບັນດາກົງຈັກການຈັດຕັ້ງຂອງສະພາແຫ່ງຊາດ, ສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນຂັ້ນແຂວງ, ນະຄອນຫຼວງ ແລະ ພະນັກງານ-ລັດຖະກອນ ຂອງກົງຈັກການຈັດຕັ້ງພາຍໃນສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ;

3.2. ຈັດທຳປຶ້ມປະມວນເອກະສານກອງປະຊຸມສະພາແຫ່ງຊາດ, ກອງປະຊຸມຝຶກອົບຮົມ, ສຳມະນາ ແລະ ກອງປະຊຸມອື່ນ ລວມທັງ ສ້າງແຜ່ນພັບກ່ຽວກັບວຽກງານຂອງສະພາແຫ່ງຊາດ;

3.3. ສ້າງ, ພັດທະນາ ແລະ ປັບປຸງເນື້ອໃນເຄືອຂ່າຍພາຍໃນ (intranet) ແລະ ຖານຂໍ້ມູນ (database) ຂອງສະພາແຫ່ງຊາດ;

3.4. ຈັດໂຕະສະໜອງຂໍ້ມູນຂ່າວສານໃຫ້ແກ່ສະມາຊິກສະພາແຫ່ງຊາດ ໃນເວລາດຳເນີນກອງປະຊຸມສະພາແຫ່ງຊາດ;

3.5. ຄຸ້ມຄອງ ແລະ ພັດທະນາວຽກງານຫໍສະໝຸດສະພາແຫ່ງຊາດ ໃຫ້ທັນສະໄໝ ແລະ ສາມາດໃຫ້ການບໍລິການຢ່າງກວ້າງຂວາງ;

3.6. ຈັດຝຶກອົບຮົມໃນການຍົກລະດັບຄວາມຮູ້ວິຊາການ ດ້ານຂໍ້ມູນຂ່າວສານ ວຽກງານສະພາແຫ່ງຊາດ ແລະ ຫໍສະໝຸດ ໃຫ້ແກ່ພະນັກງານທີ່ເປັນເສນາທິການ.

4. ຄົ້ນຄວ້າ ສ້າງຮ່າງນິຕິກຳກ່ຽວກັບການຄົ້ນຄ້ວາ ແລະ ຄຸ້ມຄອງວິທະຍາສາດ, ການຍົກສູງຂີດຄວາມສາມາດ, ການສະໜອງຂໍ້ມູນຂ່າວສານ ແລະ ຫໍສະໝຸດ:

5. ສ້າງແຜນນຳໃຊ້ງົບປະມານຂອງລັດ ແລະ ງົບປະມານຊ່ວຍເຫຼືອຈາກຕ່າງປະເທດ ແລະ ອົງການຈັດຕັ້ງສາກົນເຂົ້າໃນຄົ້ນຄ້ວາວິທະຍາສາດ, ການຈັດກອງປະຊຸມຝຶກອົບຮົມ ແລະ ສຳມະນາ ໃນການສ້າງຂີດຄວາມສາມາດໃຫ້ກຸ່ມເປົ້າໝາຍຕ່າງໆ, ການສ້າງຖານຂໍ້ມູນ ແລະ ສະໜອງຂໍ້ມູນຂ່າວສານວຽກງານສະພາແຫ່ງຊາດ ແລະ ຫໍສະໝຸດ ໃນແຕ່ລະໄລຍະ ໂດຍຜ່ານປະຕູດຽວຢູ່ຄະນະເລຂາທິການສະພາແຫ່ງຊາດ;

6. ຄຸ້ມຄອງພະນັກງານ-ລັດຖະກອນ ດ້ວຍການສຶກສາອົບຮົມການເມືອງ-ແນວຄິດ, ຍົກລະດັບຄວາມຮູ້ຄວາມສາມາດ ແລະ ສົ່ງເສີມຫົວຄິດປະດິດສ້າງດ້ານວິຊາການ ພ້ອມທັງບັນຈຸຊັບຊ້ອນ ເຂົ້າໃນຕຳແໜ່ງງານຕ່າງໆ;

7. ແລກປ່ຽນ ແລະ ໝູນໃຊ້ຂໍ້ມູນ ທີ່ກ່ຽວຂ້ອງ ກັບບັນດາຂະແໜງການຂອງລັດ ແລະ ສະຖາບັນຄົ້ນຄ້ວາຕ່າງໆເພື່ອປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດວຽກງານຂອງສະຖາບັນ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ;

8. ສ້າງແຜນການພົວພັນກັບອົງການຈັດຕັ້ງສາກົນ ແລະ ສະຖາບັນຄົ້ນຄ້ວາທີ່ກ່ຽວຂ້ອງ ຢູ່ຕ່າງປະເທດ, ພາກພື້ນ ແລະ ສາກົນ ເພື່ອຮ່ວມມືກັນໃນການຄົ້ນຄວ້າວິທະຍາສາດ, ການຍົກສູງຂີດຄວາມສາມາດ, ຂໍ້ມູນ-ຂ່າວສານ, ການຍາດແຍ່ງທຶນຮອນ ແລະ ເຕັກນິກວິຊາການ ຕາມການຕົກລົງຂອງຄະນະປະຈຳສະພາແຫ່ງຊາດ;

9. ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຈາກຄະນະປະຈຳສະພາແຫ່ງຊາດ.

### ມາດຕາ 5 ຂອບເຂດສິດຂອງສະຖາບັນຄົ້ນຄ້ວານິຕິກຳສະພາແຫ່ງຊາດ

ຂອບເຂດສິດຂອງສະຖາບັນຄົ້ນຄ້ວານິຕິກຳສະພາແຫ່ງຊາດ ມີດັ່ງນີ້:

1. ນຳສະເໜີຜົນການຄົ້ນຄ້ວາວິທະຍາສາດ, ມີຄຳເຫັນຕໍ່ນິຕິບັນຍັດ, ບັນຫາສຳຄັນພື້ນຖານ ແລະ ທິດທາງແຜນການຂອງສະພາແຫ່ງຊາດໃນແຕ່ລະໄລຍະ ຕໍ່ຄະນະປະຈຳສະພາແຫ່ງຊາດພິຈາລະນາ;
2. ເຂົ້າຮ່ວມກອງປະຊຸມລະດັບຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ ຕາມການເຊື້ອເຊີນ ແລະ ການຕົກລົງຂອງຄະນະປະຈຳສະພາແຫ່ງຊາດ;
3. ສະເໜີບັນດາກົງຈັກການຈັດຕັ້ງຂອງ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ບັນດາຂະແໜງການຂອງລັດ ແລະ ສະຖາບັນທີ່ກ່ຽວຂ້ອງ ເພື່ອສະໜອງຂໍ້ມູນທີ່ຈຳເປັນໃນການຄົ້ນຄ້ວາວິທະຍາສາດ ກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວຂອງສະພາແຫ່ງຊາດ, ການຍົກສູງຂີດຄວາມສາມາດ ໃຫ້ແກ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ;

4. ຈັດກອງປະຊຸມຄົ້ນຄ້ວາວິທະຍາສາດ, ກອງປະຊຸມສຳມະນາວິທະຍາສາດ, ວິຊາການ ແລະ ແລກປ່ຽນບົດຮຽນ ແລະ ກອງປະຊຸມຝຶກອົບຮົມ ໃນການຍົກສູງຂີດຄວາມສາມາດ ໃຫ້ແກ່ສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນຂັ້ນແຂວງ ແລະ ພະນັກງານທີ່ເປັນເສນາທິການ ທີ່ກ່ຽວຂ້ອງ;
5. ເຜີຍແຜ່ຜົນການຄົ້ນຄວ້າຜະລິດຕະພັນວິທະຍາສາດ, ຂໍ້ມູນຂ່າວສານວຽກງານສະພາແຫ່ງຊາດ ແລະ ບົດຮຽນທີ່ດີ ຂອງສາກົນ ຜ່ານທາງສື່ມວນຊົນ, ທາງເວບໄຊສ ແລະ ສື່ອີເລັກໂຕຣນິກຕ່າງໆ;
6. ສ້າງເຄືອຂ່າຍການຄົ້ນຄ້ວາ, ແລກປ່ຽນຂໍ້ມູນຂ່າວສານ, ຜົນການຄົ້ນຄ້ວາ ແລະ ຕົວແບບທີ່ດີ ກັບສະຖາບັນຄົ້ນຄ້ວາ ທັງພາຍໃນ ແລະ ຕ່າງປະເທດ ພ້ອມທັງຮ່ວມມືກັນ ໃນການຄົ້ນຄ້ວາຫົວຂໍ້ເນື້ອໃນຕ່າງໆ ທາງດ້ານວິທະຍາສາດ ກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວຂອງສະພາແຫ່ງຊາດ ທີ່ມີການຕົກລົງຮ່ວມກັນ;
7. ພົວພັນຮ່ວມມື ກ່ຽວກັບການຄົ້ນຄ້ວາວິທະຍາສາດນິຕິບັນຍັດ ກັບສະຖາບັນຄົ້ນຄ້ວາທີ່ກ່ຽວຂ້ອງຂອງຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ເພື່ອຍາດແຍ່ງການສະໜັບສະໜູນດ້ານທຶນຮອນ, ເຕັກນິກວິຊາການ ແລະ ອື່ນໆ ຕາມການຕົກລົງຂອງຄະນະປະຈຳສະພາແຫ່ງຊາດ;
8. ອອກຂໍ້ຕົກລົງ, ລະບຽບການ, ຄຳແນະນຳ ແລະ ແຈ້ງການກ່ຽວກັບບັນຫາຕ່າງໆ ທີ່ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
9. ສະເໜີສ້າງຕັ້ງ, ໂຮມເຂົ້າກັນ, ແຍກ, ຍຸບເລີກ ຫຼື ປ່ຽນຊື່ກົງຈັກການຈັດຕັ້ງ ທີ່ເຫັນວ່າມີຄວາມຕ້ອງການ ແລະ ຈຳເປັນ ຂອງສະຖາບັນຄົ້ນຄ້ວານິຕິກຳສະພາແຫ່ງຊາດ;
10. ສະເໜີແຕ່ງຕັ້ງຕຳແໜ່ງບໍລິຫານ, ບັນຈຸ, ຊັບຊ້ອນໜ້າທີ່, ຍົກຍ້າຍບ່ອນປະຈຳການ, ປະຕິບັດນະໂຍບາຍ, ຍ້ອງຍໍ ແລະ ລົງວິໄນຕໍ່ພະນັກງານ-ລັດຖະກອນ ແລະ ນັກຄົ້ນຄ້ວາ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງຕົນ ຕາມກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ;
11. ປະຕິບັດສິດອື່ນໆ ຕາມການມອບໝາຍຂອງຄະນະປະຈຳສະພາແຫ່ງຊາດ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ
## ຂອງສະຖາບັນຄົ້ນຄ້ວານິຕິກຳສະພາແຫ່ງຊາດ

### ມາດຕາ 6 ໂຄງປະກອບບຸກຄະລາກອນ

ສະຖາບັນຄົ້ນຄ້ວານິຕິກຳສະພາແຫ່ງຊາດ ປະກອບມີບຸກຄະລາກອນ ຄື:

- ຫົວໜ້າສະຖາບັນຄົ້ນຄ້ວານິຕິກຳສະພາແຫ່ງຊາດ;
- ຮອງຫົວໜ້າສະຖາບັນຄົ້ນຄ້ວານິຕິກຳສະພາແຫ່ງຊາດ;
- ເສນາທິການຊ່ວຍວຽກທີ່ປະກອບດ້ວຍຄະນະສູນ, ຄະນະພະແນກ ແລະ ລັດຖະກອນວິຊາການຈຳນວນໜຶ່ງ.

### ມາດຕາ 7 ໂຄງປະກອບກົງຈັກການຈັດຕັ້ງເສນາທິການ

ສະຖາບັນຄົ້ນຄ້ວານິຕິກຳສະພາແຫ່ງຊາດ_ມີກົງຈັກການຈັດຕັ້ງທີ່ເປັນເສນາທິການ ຈຳນວນ 2 ສູນ ທີ່ມີຖານະທຽບເທົ່າກົມ ຄື:

1. ສູນຄົ້ນຄວ້າວິທະຍາສາດ ແລະ ນິຕິກຳ;

2. ສູນຝຶກອົບຮົມ ແລະ ຂໍ້ມູນຂ່າວສານ.

ການຈັດຕັ້ງ ແລະ ການເຄື່ອນໄຫວຂອງບັນດາສູນ ແມ່ນຄະນະເລຂາທິການສະພາແຫ່ງຊາດ ເປັນຜູ້ອອກຂໍ້ຕົກລົງ.

**ມາດຕາ 8 ໜ້າທີ່ ແລະ ຂອບເຂດສິດຂອງຫົວໜ້າສະຖາບັນຄົ້ນຄ້ວານິຕິກຳສະພາແຫ່ງຊາດ**

ຫົວໜ້າສະຖາບັນຄົ້ນຄ້ວານິຕິກຳສະພາແຫ່ງຊາດ ມີໜ້າທີ່ ແລະ ຂອບເຂດສິດ ດັ່ງນີ້:

1. ນຳພາ ແລະ ຊີ້ນຳລວມ, ຮັບຜິດຊອບດ້ານການເມືອງ-ແນວຄິດ, ການຈັດຕັ້ງ ແລະ ບຸກຄະລາກອນ ຂອງສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ;
2. ກຳນົດແຜນຍຸດທະສາດ ແລະ ທິດທາງແຜນການ ຂອງສະຖາບັນຄົ້ນຄ້ວານິຕິກຳສະພາແຫ່ງຊາດ ໂດຍຫັນເປັນແຜນງານ, ໂຄງການ ແລະ ງົບປະມານ ໃນແຕ່ໄລຍະ;
3. ຊີ້ນຳ, ຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດແຜນການ ແລະ ວຽກງານຕ່າງໆ ຂອງສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ;
4. ເຂົ້າຮ່ວມກອງປະຊຸມສະພາແຫ່ງຊາດ, ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ແລະ ກອງປະຊຸມອື່ນໆ ຂອງບັນດາຂະແໜງການທີ່ກ່ຽວຂ້ອງ ຕາມການເຊື້ອເຊີນ ແລະ ການເຫັນດີຂອງຄະນະປະຈຳສະພາແຫ່ງຊາດ;
5. ສະເໜີລາຍງານຕໍ່ຄະນະປະຈຳສະພາແຫ່ງຊາດ ກ່ຽວກັບຜົນການຄົ້ນຄວ້າວິທະຍາສາດ, ນິຕິຍັນຍັດ ແລະ ບັນຫາສຳຄັນພື້ນຖານ, ການຍົກສູງຂີດຄວາມສາມາດ ໃຫ້ເປົ້າໝາຍຕ່າງໆ ແລະ ຂໍ້ມູນຂ່າວສານວຽກງານສະພາແຫ່ງຊາດ ໃນແຕ່ລະໄລຍະ;
6. ສະເໜີຄະນະປະຈຳສະພາແຫ່ງຊາດ ເພື່ອພິຈາລະນາກ່ຽວກັບ ການປັບປຸງການຈັດຕັ້ງ ແລະ ການເຄື່ອນໄຫວຂອງສະຖາບັນຄົ້ນຄ້ວານິຕິກຳສະພາແຫ່ງຊາດ;
7. ຮຽກໂຮມປະຊຸມ ແລະ ເປັນປະທານກອງປະຊຸມຂອງຄະນະສະຖາບັນ ແລະ ກອງປະຊຸມຂອງສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ, ກອງປະຊຸມຄົ້ນຄ້ວາວິທະຍາມາດ ແລະ ຮັບສ່ອງແສງລາຍງານຈາກບັນດາສູນທີ່ຂຶ້ນກັບຕົນ;
8. ພົວພັນ ແລະ ປະສານງານກັບຄະນະນຳຂອງບັນດາກົງຈັກການຈັດຕັ້ງຂອງສະພາແຫ່ງຊາດ ແລະ ພາກສ່ວນທີ່ກ່ຽວຂ້ອງ ທັງພາຍໃນ ແລະ ຕ່າງປະເທດ ເພື່ອແລກປ່ຽນຂໍ້ມູນ, ການຮ່ວມມື ແລະ ການຊ່ວຍເຫຼືອ ໃນການຈັດຕັ້ງປະຕິບັດ ວຽກງານຂອງສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ ຕາມການເຫັນດີຂອງທ່ານຮອງປະທານສະພາແຫ່ງຊາດ ຜູ້ຊີ້ນຳ ຫຼື ຄະນະປະຈຳສະພາແຫ່ງຊາດ;
9. ອອກຂໍ້ຕົກລົງ, ຄຳແນະນຳ ແລະ ແຈ້ງການຕ່າງໆ ກ່ຽວກັບວຽກງານຂອງສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ;
10. ສະຫຼຸບລາຍງານການເຄື່ອນໄຫວວຽກງານ ຂອງສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ ຕໍ່ທ່ານຮອງປະ-ທານສະພາແຫ່ງຊາດ ຜູ້ຊີ້ນຳ ຫຼື ຄະນະປະຈຳສະພາແຫ່ງຊາດ ເປັນປົກກະຕິ;
11. ປະຕິບັດໜ້າທີ່ວຽກງານອື່ນໆ ຕາມການມອບໝາຍຂອງຄະນະປະຈຳສະພາແຫ່ງຊາດ.

**ມາດຕາ 9 ໜ້າທີ່ ແລະຂອບເຂດສິດຂອງຮອງຫົວໜ້າສະຖາບັນຄົ້ນຄ້ວານິຕິກຳສະພາແຫ່ງຊາດ**

ຮອງຫົວໜ້າສະຖາບັນຄົ້ນຄ້ວານິຕິກຳສະພາແຫ່ງຊາດ ມີໜ້າທີ່ ແລະ ຂອບເຂດສິດ ດັ່ງນີ້:

1. ຮອງຫົວໜ້າສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ ເປັນຜູ້ຊ່ວຍຫົວໜ້າສະຖາບັນໃນການຈັດຕັ້ງປະຕິບັດໜ້າທີ່ ແລະ ຂອບເຂດສິດຂອງສະຖາບັນ ແລະ ລົງເລິກຊ່ວຍວຽກງານໃດໜຶ່ງ ຕາມການມອບໝາຍຂອງຫົວໜ້າສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ;
2. ຮັກສາການແທນຫົວໜ້າສະຖາບັນ ຕາມການມອບໝາຍ ໃນກໍລະນີຫົວໜ້າຕິດຂັດ ຫຼື ບໍ່ສາມາດປະຕິບັດໜ້າທີ່ໄດ້;
3. ຊ່ວຍນຳພາ ແລະ ຊີ້ນຳລວມດ້ານການເມືອງ ແນວຄິດ ແລະ ການຈັດຕັ້ງຂອງສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ;
4. ຊ່ວຍກຳນົດແຜນການເຄື່ອນໄຫວວຽກງານຂອງສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ ໃນແຕ່ລະໄລຍະ;
5. ຊ່ວຍພົວພັນ ແລະ ປະສານງານກັບຄະນະນຳຂອງບັນດາກົງຈັກການຈັດຕັ້ງ ຂອງສະພາແຫ່ງຊາດ ແລະ ພາກສ່ວນທີ່ກ່ຽວຂ້ອງ ທັງພາຍໃນ ແລະ ຕ່າງປະເທດ ເພື່ອແລກປ່ຽນຂໍ້ມູນ, ການຊ່ວຍເຫຼືອ ແລະ ການຮ່ວມມືກັນໃນການປະຕິບັດໜ້າທີ່ຂອງສະຖາບັນຄົ້ນຄ້ວານິຕິກຳສະພາແຫ່ງຊາດ ຕາມການຊີ້ນຳຂອງຄະນະປະຈຳສະພາແຫ່ງຊາດ;
6. ປະຕິບັດໜ້າທີ່ວຽກງານອື່ນໆ ຕາມການມອບໝາຍຂອງຫົວໜ້າສະຖາບັນຄົ້ນຄ້ວານິຕິກຳສະພາແຫ່ງຊາດ.

## ໝວດທີ 4
## ກອງປະຊຸມຂອງສະຖາບັນຄົ້ນຄ້ວານິຕິກຳສະພາແຫ່ງຊາດ

### ມາດຕາ 10 ກອງປະຊຸມຂອງສະຖາບັນຄົ້ນຄ້ວານິຕິກຳສະພາແຫ່ງຊາດ

ກອງປະຊຸມຂອງສະຖາບັນຄົ້ນຄ້ວານິຕິກຳສະພາແຫ່ງຊາດ ມີ 3 ປະເພດ ດັ່ງນີ້:

- ກອງປະຊຸມຄະນະສະຖາບັນຄົ້ນຄ້ວານິຕິກຳສະພາແຫ່ງຊາດ;
- ກອງປະຊຸມຂອງສະຖາບັນຄົ້ນຄ້ວານິຕິກຳສະພາແຫ່ງຊາດ;
- ກອງປະຊຸມຄົ້ນຄວ້າວິທະຍາສາດ.

### ມາດຕາ 11 ກອງປະຊຸມຄະນະສະຖາບັນຄົ້ນຄ້ວານິຕິກຳສະພາແຫ່ງຊາດ

ກອງປະຊຸມຄະນະສະຖາບັນຄົ້ນຄ້ວານິຕິກຳສະພາແຫ່ງຊາດ ເປີດຂຶ້ນຢ່າງໜ້ອຍເດືອນລະເທື່ອ ໂດຍແມ່ນຫົວໜ້າສະຖາບັນຄົ້ນຄ້ວານິຕິກຳສະພາແຫ່ງຊາດເປັນຜູ້ຮຽກໂຮມ ແລະ ເປັນປະທານກອງປະຊຸມ.

1. ກອງປະຊຸມຄະນະສະຖາບັນຄົ້ນຄ້ວານິຕິກຳສະພາແຫ່ງຊາດ ມີ 2 ຮູບແບບ ຄື: ຮູບແບບສະເພາະ ແລະ ເປີດກ້ວາງ.
   1.1. ກອງປະຊຸມສະເພາະ ແມ່ນກອງປະຊຸມ ລະຫວ່າງຫົວໜ້າສະຖາບັນ ແລະ ບັນດາຮອງຫົວໜ້າສະຖາບັນ;
   1.2. ກອງປະຊຸມເປີດກ້ວາງ ແມ່ນກອງປະຊຸມ ລະຫວ່າງຫົວໜ້າສະຖາບັນ ແລະ ບັນດາຮອງຫົວໜ້າສະຖາບັນ ໂດຍມີບັນດາຫົວໜ້າສູນ ແລະ ພາກສ່ວນກ່ຽວຂ້ອງອື່ນ ເຂົ້າຮ່ວມ.
2. ກອງປະຊຸມຄະນະສະຖາບັນຄົ້ນຄ້ວານິຕິກຳສະພາແຫ່ງຊາດ ມີເນື້ອໃນ ດັ່ງນີ້:
   2.1. ຜ່ານບົດສະຫຼຸບຕີລາຄາການເຄື່ອນໄຫວວຽກງານປະຈຳເດືອນ ແລະ ປະຈຳໄຕມາດ ພ້ອມທັງວາງແຜນການຈຸດສຸມ ປະຈຳເດືອນ ແລະ ປະຈຳໄຕມາດ ຂອງສະຖາບັນຄົ້ນຄ້ວານິຕິກຳສະພາແຫ່ງຊາດ;

2.2. ເກັບກຳບັນຫາທີ່ພົ້ນເດັ່ນ ທີ່ພົວພັນເຖິງສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ ແລະ ສະພາແຫ່ງຊາດ ເພື່ອລາຍງານຂໍທິດຊີ້ນຳຕໍ່ຄະນະປະຈຳສະພາແຫ່ງຊາດ ພິຈາລະນາ;

2.3. ຮັບຟັງການລາຍງານຂອງບັນດາສູນ ກ່ຽວກັບບັນຫາທີ່ສຳຄັນ ຕິດພັນກັບການປະຕິບັດພາລະບົດບາດ, ໜ້າທີ່ ແລະ ຂອບເຂດສິດ ຂອງສະຖາບັນ ກໍ່ຄືບັນດາສູນ ເພື່ອຄົ້ນຄວ້າ, ປຶກສາຫາລື ແລະ ປະກອບຄຳເຫັນ ເພື່ອຊຸກຍູ້ການຈັດຕັ້ງປະຕິບັດໜ້າທີ່ແຕ່ລະດ້ານ ໃຫ້ມີປະສິດທິຜົນ;

2.4. ປຶກສາຫາລືບັນຫາທີ່ສຳຄັນ ໃນການຄົ້ນຄ້ວາວິທະຍາສາດ, ນິຕິກຳ, ບັນຫາສຳຄັນພື້ນຖານ, ຫົວຂໍ້ເນື້ອໃນຝຶກອົບຮົມ, ຂໍ້ມູນຂ່າວສານ ແລະ ບັນຫາອື່ນ ທີ່ມີຄວາມຈຳເປັນ;

2.5. ຄົ້ນຄວ້າ, ພິຈາລະນາກ່ຽວກັບການສ້າງ ແລະ ຍົກລະດັບຄວາມຮູ້ ແລະ ຄວາມສາມາດດ້ານວິຊາການ, ການແຕ່ງຕັ້ງ, ການບັນຈຸ, ຊັບຊ້ອນໜ້າທີ່, ການຍົກຍ້າຍບ່ອນປະຈຳການ, ການປະຕິບັດນະໂຍບາຍ, ຍ້ອງຍໍ ແລະ ລົງວິໄນຕໍ່ພະນັກງານ-ລັດຖະກອນ ແລະ ນັກຄົ້ນຄ້ວາ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງຕົນ ຕາມກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ;

2.6. ຄົ້ນຄ້ວາ ແລະ ປຶກສາຫາລືວຽກງານອື່ນໆ ຕາມໜ້າທີ່ ແລະ ຂອບເຂດສິດຂອງສະຖາບັນຄົ້ນຄ້ວານິຕິກຳສະພາແຫ່ງຊາດ ແລະ ຕາມການມອບໝາຍຂອງຄະນະປະຈຳສະພາແຫ່ງຊາດ.

### ມາດຕາ 12 ກອງປະຊຸມຂອງສະຖາບັນຄົ້ນຄ້ວານິຕິກຳສະພາແຫ່ງຊາດ

ກອງປະຊຸມຂອງສະຖາບັນຄົ້ນຄ້ວານິຕິກຳສະພາແຫ່ງຊາດ ເປີດຂຶ້ນ ປີລະ 2 ເທື່ອ ໂດຍແມ່ນຫົວໜ້າສະຖາບັນຄົ້ນຄ້ວານິຕິກຳສະພາແຫ່ງຊາດເປັນຜູ້ຮຽກໂຮມ ແລະ ເປັນປະທານກອງປະຊຸມ ຊຶ່ງມີບັນດາຮອງຫົວໜ້າສະຖາບັນ, ບັນດາຫົວໜ້າສູນ, ພະນັກງານທີ່ເປັນເສນາທິການຂອງສະຖາບັນ ແລະ ບັນດາກົງຈັກການຈັດຕັ້ງຂອງສະພາແຫ່ງຊາດ ແລະ ພາກສ່ວນກ່ຽວຂ້ອງອື່ນ ເຂົ້າຮ່ວມ.

ກອງປະຊຸມຂອງສະຖາບັນຄົ້ນຄ້ວານິຕິກຳສະພາແຫ່ງຊາດ ແມ່ນເພື່ອສະຫຼຸບຕີລາຄາການເຄື່ອນໄຫວວຽກງານປະຈຳ 6 ເດືອນ ແລະ ປະຈຳປີ ພ້ອມທັງວາງທິດທາງແຜນການ ປະຈຳ 6 ເດືອນ ແລະ ປະຈຳປີ ຂອງສະຖາບັນຄົ້ນຄ້ວານິຕິກຳສະພາແຫ່ງຊາດ.

### ມາດຕາ 13 ກອງປະຊຸມຄົ້ນຄວ້າວິທະຍາສາດ

ກອງປະຊຸມຄົ້ນຄວ້າວິທະຍາສາດ ແມ່ນກອງປະຊຸມຄົ້ນຄວ້າ, ສະຫຼຸບລາຍງານ, ພິມເຜີຍແຜ່ ຜົນຂອງຜະລິດຕະພັນວິທະຍາສາດ ຫຼື ບັນຫາທີ່ມີຄວາມຈຳເປັນ, ຮີບດ່ວນ ແລະ ສັງຄົມໃຫ້ຄວາມສົນໃຈ ໂດຍແມ່ນຫົວໜ້າສະຖາບັນຄົ້ນຄ້ວານິຕິກຳສະພາແຫ່ງຊາດ ເປັນຜູ້ຮຽກໂຮມ ຊຶ່ງມີສະພາວິທະຍາສາດຕາມຂົງເຂດ ແລະ ນັກຄົ້ນຄ້ວາ ທີ່ກ່ຽວຂ້ອງເຂົ້າຮ່ວມ.

ກອງປະຊຸມຄົ້ນຄວ້າວິທະຍາສາດ ຈັດຂຶ້ນ ເພື່ອຮັບຟັງ, ຄົ້ນຄວ້າ ແລະ ວິໄຈ ຫົວຂໍ້ວິທະຍາສາດທີ່ມີຄວາມຕ້ອງການ ແລະ ຈຳເປັນ ໂດຍໃຫ້ສະຫຼຸບ, ສັງລວມເນື້ອໃນ ແລະ ລາຍງານຄະນະປະຈຳສະພາແຫ່ງຊາດ ຫຼື ພາກສ່ວນທີ່ກ່ຽວຂ້ອງ ເພື່ອໃຫ້ທິດຊີ້ນຳ ແລະ ພິຈາລະນາຮັບຮອງ.

## ໝວດທີ 5
## ຫຼັກການ ແລະ ແບບແຜນວິທີເຮັດວຽກ

### ມາດຕາ 14 ຫຼັກການ

ສະຖາບັນຄົ້ນຄ້ວານິຕິກຳສະພາແຫ່ງຊາດ ຈັດຕັ້ງ ແລະ ເຄື່ອນໄຫວວຽກງານຕາມຫຼັກການລວມສູນປະຊາທິປະໄຕ, ປະຕິບັດລະບອບນຳພາ ແລະ ຕົກລົງເປັນໝູ່ຄະນະ, ແບ່ງງານໃຫ້ແກ່ບຸກຄົນຮັບຜິດຊອບ ຢ່າງຈະແຈ້ງ ແລະ ເສີມຂະຫຍາຍຫົວຄິດປະດິດສ້າງຂອງພະນັກງານ-ລັດຖະກອນ, ທຸກການເຄື່ອນໄຫວຂອງຄະນະສະຖາບັນ, ຄະນະສູນ ແລະ ພະນັກງງານ-ລັດຖະກອນ ແມ່ນອີງໃສ່ກົດໝາຍ, ນິຕິກຳໃຕ້ກົດໝາຍ ແລະ ຈັດຕັ້ງຜັນຂະຫຍາຍແນວທາງນະໂຍບາຍຂອງພັກ, ທິດທາງແຜນການຂອງສະພາແຫ່ງຊາດ ແລະ ທິດທາງແຜນການຂອງສະຖາບັນຄົ້ນຄ້ວານິຕິກຳສະພາແຫ່ງຊາດ ໃຫ້ໄດ້ຮັບຜົນດີ.

### ມາດຕາ 15ແບບແຜນວິທີເຮັດວຽກ

1. ເຮັດວຽກມີແຜນງານ, ແຜນການ ແລະ ໂຄງການລະອຽດ, ແກ້ໄຂວຽກງານຢ່າງມີຈຸດສຸມ ແລະ ມີເປົ້າໝາຍໃນແຕ່ລະໄລຍະ;
2. ເຮັດວຽກມີການກວດກາ, ຕິດຕາມ ຊຸກຍູ້, ສະຫຼຸບ, ຖອດຖອນບົດຮຽນ ແລະ ຕີລາຄາຜົນໄດ້-ຜົນເສຍພ້ອມທັງປະຕິບັດລາຍງານສ່ອງແສງ ຢ່າງເຂັ້ມງວດ;
3. ປະຕິບັດລະບອບປະຊຸມປະຈຳເດືອນ, 3 ເດືອນ, 6 ເດືອນ, ປະຈຳປີ ແລະ ປະຕິບັດລະບອບລາຍງານໃຫ້ຮອງປະທານສະພາແຫ່ງຊາດ, ຜູ້ຊີ້ນຳ ແລະ ຄະນະປະຈຳສະພາແຫ່ງຊາດ ເປັນປົກກະຕິ.

### ມາດຕາ 16 ການປະສານງານ

ສະຖາບັນຄົ້ນຄ້ວານິຕິກຳສະພາແຫ່ງຊາດ ມີການປະສານງານ ດັ່ງນີ້:

1. ປະສານງານກັບຄະນະເລຂາທິການສະພາແຫ່ງຊາດ ໃນວຽກງານທີ່ຕິດພັນກັບການສ້າງແຜນການ ແລະ ການສະຫຼຸບລາຍງານປະຈຳເດືອນ, 3 ເດືອນ, 6 ເດືອນ, ປະຈຳປີ ແລະ 5 ປີ ກ່ຽວກັບການເຄື່ອນໄຫວວຽກງານຂອງສະຖາບັນ; ການສະເໜີແຜນນຳໃຊ້ງົບປະມານຂອງລັດ ແລະ ງົບປະມານການຊ່ວຍເຫຼືອລ້າຈາກຕ່າງປະເທດ ເພື່ອນຳໃຊເຂົ້າໃນວຽກງານຂອງສະຖາບັນ ໂດຍຜ່ານປະຕູດຽວ; ການບໍລິຫານ ແລະ ສິ່ງອຳນວຍຄວາມສະດວກອື່ນ; ການກຳນົດໂຄງປະກອບກົງຈັກ ແລະ ບຸກຄະລາກອນ, ການບຳລຸງສ້າງ, ແຕ່ງຕັ້ງ, ຍົກຍ້າຍ, ປົດຕຳແໜ່ງ, ເລື່ອນຕຳແໜ່ງບໍລິຫານ, ເລື່ອນຊັ້ນຂັ້ນເງິນເດືອນ, ການປະຕິບັດນະໂຍບາຍ, ຍ້ອງຍໍ, ລົງວິໄນ ແລະ ບັນຫາອື່ນໆ;
2. ປະສານສົມທົບກັບບັນດາກຳມາທິການຂອງສະພາແຫ່ງຊາດ ໃນວຽກງານກ່ຽວກັບການສ້າງທິດທາງແຜນການ, ແຜນງານ ແລະ ໂຄງການໃນການຄົ້ນຄ້ວາວິທະຍາສາດ, ນິຕິກຳ ແລະ ບັນຫາສຳຄັນພື້ນຖານ ໃນແຕ່ລະໄລຍະ; ການປຶກສາຫາລືກ່ຽວກັບການກຳນົດຫົວຂໍ້, ເນື້ອໃນ, ຮູບການ, ວິທີການ ແລະ ບຸລິມະສິດ ໃນການຝຶກອົບຮົມ ແລະ ສຳມະນາ ເພື່ອຍົກສູງຂີດຄວາມສາມາດ ໃຫ້ແກ່ສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນຂັ້ນແຂວງ ແລະ ພະນັກງານທີ່ເປັນເສນາທິການໃນກົງຈັກການຈັດຕັ້ງຂອງສະພາແຫ່ງຊາດໃຫ້ສອດຄ່ອງກັບຄວາມຕ້ອງການຂອງວຽກງານຕົວຈິງ ໃນແຕ່ລະໄລຍະ; ການແລກປ່ຽນຂໍ້ມູນຂ່າວສານຕ່າງໆ ທີ່ຕິດພັນກັບບັນດາກຳມາທິການ ແລະ ບັນຫາອື່ນ;

3. ພົວພັນປະສານງານກັບບັນດາຂະແໜງການຂອງລັດ ແລະ ສະຖາບັນຄົ້ນຄ້ວາຕ່າງໆ ໃນການແລກປ່ຽນ ແລະ ໝູນໃຊ້ຂໍ້ມູນ ທີ່ກ່ຽວຂ້ອງ ເພື່ອປະກອບສ່ວນເຂົ້າໃນການຄົ້ນຄ້ວາ ແລະ ຄຸ້ມຄອງວຽກງານວິທະຍາສາດ, ນິຕິບັນຍັດ ແລະ ບັນຫາສໍາຄັນພື້ນຖານຂອງສະພາແຫ່ງຊາດ, ການຍົກສູງຂີດຄວາມສາມາດ ແລະ ຂໍ້ມູນຂ່າວສານວຽກງານສະພາແຫ່ງຊາດ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

## ໝວດທີ 7
## ງົບປະມານ ແລະ ຕາປະທັບ

**ມາດຕາ 17 ງົບປະມານ**

ສະຖາບັນຄົ້ນຄ້ວານິຕິກໍາສະພາແຫ່ງຊາດ ມີງົບປະມານຮັບໃຊ້ການເຄື່ອນໄຫວປະຕິບັດໜ້າທີ່ຂອງຕົນ ຕາມການຕົກລົງຂອງຄະນະປະຈໍາສະພາແຫ່ງຊາດ.

**ມາດຕາ 18 ຕາປະທັບຂອງສະຖາບັນຄົ້ນຄ້ວານິຕິກໍາສະພາແຫ່ງຊາດ**

ສະຖາບັນຄົ້ນຄ້ວານິຕິກໍາສະພາແຫ່ງຊາດ ມີຕາປະທັບເປັນຂອງຕົນ ຊຶ່ງເປັນຮູບວົງມົນ, ຢູ່ໃນຮູບວົງມົນມີເຄື່ອງໝາຍກາຊາດ, ເນື້ອໃນຢູ່ໃນຂອບວົງມົນເບື້ອງເທິງຂຽນວ່າ: **"ສະພາແຫ່ງຊາດ"** ເບື້ອງລຸ່ມຂຽນວ່າ **"ສະຖາບັນຄົ້ນຄ້ວານິຕິກໍາ"**, ຊຶ່ງຂັ້ນດ້ວຍຮູບດາວຫ້າແຈ.

## ໝວດທີ 7
## ບົດບັນຍັດສຸດທ້າຍ

**ມາດຕາ 19 ການຈັດຕັ້ງປະຕິບັດ**

ສະຖາບັນຄົ້ນຄ້ວານິຕິກໍາສະພາແຫ່ງຊາດ, ບັນດາກົງຈັກການຈັດຕັ້ງຂອງສະພາແຫ່ງຊາດ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດເນື້ອໃນມະຕິສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 20ຜົນສັກສິດ**

ມະຕິສະບັບນີ້ ປ່ຽນແທນມະຕິຂອງຄະນະປະຈໍາສະພາແຫ່ງຊາດ ສະບັບເລກທີ 0124/ຄປຈ, ລົງວັນທີ 31 ສິງຫາ 2016 ແລະ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ

**ຄະນະປະຈໍາສະພາແຫ່ງຊາດ**
**ປະທານ**

ປອ ໄຊສົມພອນ ພົມວິຫານ